ເດືອນມັງກອນ 2025

ໜັງສືແຈ້ງການສຳຄັນຈາກພະແນກບໍລິການດ້ານພັດທະນາກ່ຽວກັບ:

# ການປະສານງານບໍລິການທີ່ໄດ້ຮັບການປັບປຸງ

## ເອກະສານຂໍ້ເທັດຈິງ

### ສິ່ງທີ່ຄວນຮູ້

ການປະສານງານບໍລິການທີ່ໄດ້ຮັບການປັບປຸງ (ESC) ແມ່ນການບໍລິການທີ່ເນັ້ນໃສ່ບຸຄຄົນເປັນສູນກາງ. ຈັດຕັ້ງຂຶ້ນສຳລັບບຸຄຄົນຈາກຊຸມຊົນທີ່ດ້ອຍໂອກາດທີ່ໄດ້ນຳໃຊ້ບໍລິການຈັດຊື້ການບໍລິການ (POS) ໃນລະດັບຕ່ຳ ຫຼື ບໍ່ໄດ້ໃຊ້ບໍລິການເລີຍ ($0-$1,999) ຜ່ານສູນເຣຈີນັລ. ສູນເຣຈີນັລແຕ່ລະບ່ອນໄດ້ຮັບເງິນທຶນເພື່ອຈັດຕັ້ງຈຳນວນລູກຄ້າ ESC ທີ່ກຳນົດໄວ້ພາຍໃນສູນເຣຈີນັລຂອງຕົນ.

### ຈຸດເດັ່ນ

- ຜູ້ປະສານງານບໍລິການທີ່ໄດ້ຮັບການຝຶກອົບຮົມພິເສດ (SC) ມີຈຳນວນລູກຄ້າ ESC ຫຼຸດລົງເປັນ 1:40.
- ຈຳນວນລູກຄ້າທີ່ຫຼຸດລົງຈະຊ່ວຍໃຫ້ SC ສາມາດຕິດຕໍ່ກັບບຸຄຄົນ/ຄອບຄົວໃນ ESC ໄດ້ເພີ່ມຫຼາຍຂຶ້ນ.
- ESC ໃຫ້ຄວາມສຳຄັນຫຼາຍຂຶ້ນໃນການປະສານງານ ແລະສຸມໃສ່ການປັບປຸງການເຂົ້າເຖິງບໍລິການຂອງສູນເຣຈີນັລ. ເຊິ່ງອາດຈະລວມເຖິງບໍລິການ ເຊັ່ນ: ການຢຸດພັກຊົ່ວຄາວໃນເຮືອນ/ນອກເຮືອນ ແລະໂຄງການວັນຜູ້ໃຫຍ່.
- SC ໃຫ້ຄຳແນະນຳເພື່ອຊ່ວຍໃຫ້ບຸຄຄົນ/ຄອບຄົວສາມາດໃຊ້ງານລະບົບບໍລິການຄວາມພິການດ້ານພັດທະນາການຂອງລັດຄາລີຟໍເນຍໄດ້ ລວມທັງບໍລິການທົ່ວໄປ ແລະການສະໜັບສະໜູນຕ່າງໆໂດຍຜ່ານໜ່ວຍງານແລະອົງການຂອງລັດ. ເຊິ່ງອາດຈະລວມເຖິງບໍລິການຕ່າງໆ ເຊັ່ນ CalFresh, ແຜນການສຶກສາສະເພາະບຸຄຄົນຂອງເດັກ (IEP), Medi-Cal ແລະ Medicare.
- ພະແນກບໍລິການດ້ານພັດທະນາການຈະສົ່ງແບບສຳຫຼວດເພື່ອເກັບກຳຂໍ້ຄິດເຫັນຈາກບຸຄຄົນ/ຄອບຄົວໃນ ESC.
- ESC ແມ່ນເປັນທາງເລືອກ. ບຸຄຄົນ/ຄອບຄົວສາມາດເລືອກທີ່ຈະອອກຈາກ ESC ໄດ້ທຸກເວລາ.

ຕິດຕໍ່ຜູ້ປະສານງານບໍລິການ ຫຼື ສູນເຣຈີນັລຂອງທ່ານ
ຖ້າຕ້ອງການຂໍ້ມູນເພີ່ມເຕີມກ່ຽວກັບການປະສານງານບໍລິການທີ່ໄດ້ຮັບການປັບປຸງ.
ສາມາດເບິ່ງຂໍ້ມູນເພີ່ມເຕີມໄດ້ທີ່ ເວັບໄຊ DDS.

DDS Department of Developmental Services